GCI

# ບົດທີ 5

# ຄຣິສຕະຈັກທ້ອງຖິ່ນ

## ອາລຳພະບົດ

ຈຸດປະສົງຂອງບົດຮຽນ

- ເພື່ອທຳຄວາມເຂົ້າໃຈວ່າຄຣິສຕະຈັກທ້ອງຖິ່ນຄືອັນໃດ

- ເພື່ອວິເຄາະເຖິງເລື່ອງຜູ້ນຳຄຣິສຕະຈັກ

- ເພື່ອສຶກສາເຖິງເຄື່ອງໝາຍຂອງຄຣິສຕະຈັກທີ່ເກີດຜົນ

## ໂຄງຮ່າງບົດຮຽນ

I ອາລຳພະບົດ

ກ. ຄຳນິຍາມ

II ຄຣິສຕະຈັກ

ກ. ຄຣິສຕະຈັກບໍ່ແມ່ນອັນໃດແດ່
ຂ. ຄຣິສຕະຈັກຄືອັນໃດ
ຄ. ຄຣິສຕະຈັກຈະຕ້ອງເປັນຢ່າງໃດ
ງ. ຄວາມສຳຄັນຂອງຄຣິສຕະຈັກ

III ຜູ້ນຳຄຣິສຕະຈັກ

ກ. ຄຸນສົມບັດ
ຂ. ພັນທະກິດທີ່ເປັນຮາກຖານ

IV. ບົດບາດຂອງຄຣິສຕະຈັກ ແລະສະມາຊິກ

ກ. ບົດບາດຂອງຄຣິສຕະຈັກ
ຂ. ບົດບາດຂອງສະມາຊິກຄຣິສຕະຈັກ

V. ເຄື່ອງໝາຍຂອງຄຣິສຕະຈັກທີ່ເກີດຜົນ

ກ. ຜູ້ນຳທີ່ມີຊີວິດຢ່າງພະເຈົ້າ
ຂ. ວິນັຍຂອງຄຣິສຕະຈັກ
ຄ. ຄຣິສຕະຈັກໃນພະຄຳພີ

GCI

# I. <u>ອາລຳພະບົດ</u>

**ມັດທາຍ 16:18-19; ເອເຟໂຊ 2:20-22**

## *ກ. ຄຳນິຍາມ*

1. ຄຳກຣີກ "<u>ເອັກຄຣີເຊັຽ</u>" ແປວ່າ "<u>ຜູ້ທີ່ຖືກເອີ້ນອອກມາ</u>"

   ຖືກເອີ້ນອອກມາຈາກບ້ານ ແລະສະຖານທີ່ທຳງານເພື່ອພິຈາລະນາເຖິງເລື່ອງທຸລະກິດ

   ເບື້ອງຫລັງໃນສັງຄົມເຮັບເລີ - ປະຊາກອນຂອງພະເຈົ້າຖືກເອີ້ນອອກມາດ້ວຍ ກັນເພື່ອຟັງພະສຸລະສຽງຂອງພະເຈົ້າຫລືກະທຳການແທນພະເຈົ້າ **ອົບພະຍົບ 12:3,6** ຖືກເອີ້ນອອກມາຈາກເຕັ້ນເພື່ອມາຊຸມນຸມກັນ

   ກ) ອັບລາຮາມ ຖືກເອີ້ນອອກມາຈາກເມືອງເອອ ຂອງຊາວເຄລເດັຽ
   **ປະຖົມມະການ 12:1, ເຮັບເລີ 11:8**

   ຂ) ອິດສະລາເອນ ຖືກເອີ້ນອອກມາຈາກເອຢິບ
   **ປັນຍາຈານ 12:5, ກິດຈະການ7:38**

   ຄ) ຄຣິສຕະຈັກຖືກເອີ້ນອອກມາຈາກໂລກ
   **2ໂກຣິນໂທ 6:17, ພະນິມິດ 18:4**

2. ຄຣິສຕະຈັກປະກອບດ້ວຍຜູ້ຄົນທີ່ໄດ້ຮັບ**ການອະໄພໂທ**ດຄວາມບາບແລ້ວ
   ເພາະພະໂລຫິດຂອງພະເຢຊູທີ່ຫລັ່ງລົງ ພະນິມິດ 7:14

3. **ຄຣິສຕະຈັກສາກົນ -**

   **ມັດທາຍ 16:18** ຈະສ້າງຄຣິສຕະຈັກ(ເອກະພົດ) ຂອງເຮົາໄວ້ບໍ່ແມ່ນຄຣິສຕະຈັກ(ພະຫູພົດ) ຄືຜູ້ເຊື່ອທຸກຄົນໃນໂລກທີ່ເຊື່ອໃນພະເຢຊູເພື່ອໃຫ້ໄດ້ຮັບຄວາມພົ້ນ
   **ພະນິມິດ 5:9 -** ທຸກເຜົ່າ ທຸກພາສາ ທຸກປະເທດຊາດ

4. **ຄຣິສຕະຈັກທ້ອງຖິ່ນ**
   ຊຶ່ງຕ່າງຢູ່ຕາມທ້ອງຖິ່ນຕ່າງໆ - **ມັດທາຍ 18:15-20** ວິໄນຂອງສະມາຊິກຄຣິສຕະຈັກ ເປັນໄປບໍ່ໄດ້ທີ່ຈະບອກແກ່ຄຣິສຕະຈັກສາກົນ ແຕ່ບອກແກ່ສ່ວນນຶ່ງຂອງຄຣິສຕະຈັກສາກົນ ຈາກພະທຳກິດຈະການ ໃຊ້ຄຳວ່າ "ຄຣິສຕະຈັກ(ພະຫູພົດ)" ຕົວຢ່າງ ໂປໂລຂຽນເຖິງ ຄຣິສຕະຈັກໃນເມືອງຄາລາເຕັຽ, ເອເຟໂຊ, ຟີລິບບອຍ..

   ຕັ້ງຢູ່ຕາມພື້ນທີ່ທາງພູມສາດທີ່ຕ່າງກັນໄປ ແຕ່ເປັນນຶ່ງໃນພະວິນຍານໃນພັນທະສັນຍາໃຫມ່ ການຍ້າຍຄຣິສຕະຈັກ ໝາຍເຖິງການຍ້າຍໄປຢູ່ໃນເມືອງອື່ນ ແຕ່ໃນທຸກວັນນີ້ເຮົາຍ້າຍຄຣິສຕະຈັກເພາະເຮົາບໍ່ມັກໜ້າບາງຄົນ ຫລືບໍ່ມັກສິ່ງທີ່ອາຈານເທດສະນາ

GCI

5. ຄຣິສຕະຈັກໃນບ້ານ – ເປັນທີ່ຊຶ່ງສອງສາມຄົນປະຊຸມກັນໃນພະນາມພະເຢຊູ **ມັດທາຍ 18:20**

   ກ) ຄຣິສຕະຈັກຍຸກທຳອິດ – **ກິດຈະການ 22:46** ເປັນສິ່ງທີ່ເກີດຂື້ນທຸກວັນ

   ຂ) ໃນຈີນ ແລະວຽດນາມ – ຄວາມຈຳເປັນເພາະສະຖານະການທາງການເມືອງ

   ຄ) ສິງກະໂປ – ຄຣິສຕະຈັກໃຫຍ່ມີກຸ່ມເຊວ ແລະມີຜູ້ນຳ ເຮັດໃຫ້ມີການສາມັກຄີທຳໃກ້ຊິດ ດູແລກັນໄດ້ດີຂື້ນສາມາດຝຶກຜູ້ນຳໄດ້ເພີ່ມຂື້ນ ແມ່ນມີບັນຫາສຸກເສີນເກີດຂື້ນຄຣິສຕະຈັກຍັງສາມາດດຳເນີນຕໍ່ໄປໄດ້ ຖ້າກຸ່ມນ້ອຍປະຊຸມກັນໃນບ້ານ ບໍ່ຈຳເປັນຕ້ອງມີອາຄານໂບດ

6. ຮາກຖານ

   ຄົນສ້າງບ້ານທີ່ສະຫລາດ ແລະໂງ່ – **ມັດທາຍ 7:14–27**

   ໂມເຊໃຊ້ໄມ້ເທົ້າຟາດກ້ອນຫີນ ເຮັດໃຫ້ນ້ຳພຸ່ງອອກມາ – **ອົບພະຍົບ 17:6** ທຽບກັບ **ກັນດານວິຖີ20:7–12** ແລະ1ໂກຣິນໂທ 10:3 ພະສີລານັ້ນຄືພະຄຣິດ ຊຶ່ງຕ້ອງຖືກຕີພຽງຄັ້ງດຽວເທົ່ານັ້ນ
   **ເພງສັນລະເສີນ 18:31**

   ກ) **ມັດທາຍ 16:18–19**

   ຄຣິສຕະຈັກຖືກສ້າງຂື້ນເທິງຄຳກ່າວຍອມຮັບຂອງເປໂຕທີ່ວ່າພະເຢຊູຄືພະຄຣິດ ເປໂຕ ແປວ່າ "ກ້ອນຫີນນ້ອຍໆ" ແລະສີລາ ແປວ່າ " ກ້ອນຫີນຂະໜາດໃຫຍ່"

   ຂ) **ເອເຟໂຊ 2:20**

   ພະເຢຊູຄຣິສຕະຈັກຄືສີລາມຸມເອກ ໂດຍມີອັກຄະສາວົກ ແລະຜູ້ເຜີຍພະວັດຈະນະເປັນ ຮາກຖານສີລາມຸມເອກຕ້ອງວາງຮາກລົງກ່ອນຜູ້ກໍ່ສ້າງຈະປັບມຸມໃຫ້ເຂົ້າກັບສີລາມຸມ ເອກ ເຮັດໃຫ້ເກີດຄວາມ ໝັ້ນ ຄົງ ຕ້ອງໃຊ້ເວລານານເພື່ອການກໍ່ສ້າງສີລາມຸມເອກ

   ຄ) **ກິດຈະການ 2:42**

   ວາງຮາກຄຳສອນຂອງອັກຄະສາວົກ ພັນທະກິດຢ່າງອື່ນໆສ້າງຂື້ນເທິງຮາກຖານນັ້ນ

## II. <u>ຄຣິສຕະຈັກ</u>

GCI

## *ກ. ຄຣິສຕະຈັກບໍ່ແມ່ນອັນໃດແດ່?*

1. ບໍ່ແມ່ນ**ອາຄານ**

**ກິດຈະການ 2:47** - ພະຜູ້ເປັນເຈົ້າຊົງເພີ່ມຄົນເຂົ້າກັບຄຣິສຕະຈັກທຸກວັນ
**ກິດຈະການ 5:11** - ຄວາມຢ້ານຢຳຢ່າງຍິ່ງໃຫຍ່ເກີດຂຶ້ນແກ່ຄຣິສຕະຈັກທັງປວງ
**ກິດຈະການ 8:1-3-** ການຂົ່ມເຫງຄຣິສຕະຈັກເຊົາໂລພະຍາຍາມທຳລາຍຄຣິສຕະຈັກ
**ກິດຈະການ 18:22** - ໂປໂລ ກ່າວຄຳຄຳນັບຄຣິສຕະຈັກ

ສະແດງວ່າຄຣິສຕະຈັກບໍ່ແມ່ນອາຄານ

ເມື່ອພະເຢຊູຕັດວ່າ "ເຮົາຈະສ້າງຄຣິສຕະຈັກຂອງເຮົາ" ພະອົງບໍ່ໄດ້ໝາຍເຖິງວ່າພະອົງຈະສ້າງອາຄານໂບດຂຶ້ນມາ ປະຕູແຫ່ງຄວາມຕາຍຈະມີໄຊເໜືອຄຣິສຕະຈັກຂອງພະເຈົ້າກໍບໍ່ໄດ້ - ບໍ່ແມ່ນອາຄານ ອາຄານຄືສະຖານທີ່ຄຣິສຕະຈັກໃຊ້ສຳລັບການປະຊຸມກັນ ເຮົາບໍ່ໄດ້ "ໄປຄຣິສຕະຈັກ" ແຕ່ຄຣິສຕະຈັກປະຊຸມກັນໃນອາຄານ ຜູ້ນຳບາງຄົນເນັ້ນຄວາມສຳຄັນຂອງອາຄານຫລາຍເກີນໄປບໍ່ໄດ້ເນັ້ນການສ້າງຊີວິດຄົນ

2. ບໍ່ແມ່ນ**ຄະນະນິກາຍ**

ພະຄຳພີບໍ່ໄດ້ກ່າວເຖິງຄຣິສຕະຈັກແບບຕິດ ຄຣິສຕະຈັກຄຣິສຕຽນສຳພັນ ຄຣິສຕະຈັກຈີເອັມເອ. .ຄະນະນິກາຍມັກຈະເກີດຂຶ້ນຈາກສາເຫດດັ່ງຕໍ່ໄປນີ້

ກ) ເນັ້ນຫລັກຄຳສອນ ຫລືຄວາມຈິງຈາກພະຄຳພີບາງຕອນເຊັ່ນຄຣິສຕະຈັກແຫ່ງຄວາມ ບໍລິສຸດ ຄຣິສຕະຈັກເພັນເຕຄອດ ຄຣິສຕະຈັກແຫ່ງພະຄຸນ

ຂ) ເນັ້ນປະສົບການເຊັ່ນ ການບັບຕິດສະມາແບບແບັບຕິດ ການບັບຕິດສະມາໃນພະວິນຍານ ຂອງເພັນເຕຄອດ, ການເນັ້ນຄວາມບໍລິສຸດແບບເພັນເຕຄອດຂອງຄຣິສຕະຈັກແຫ່ງຄວາມບໍລິສຸດ

ຄ) ບຸກຄົນທີ່ພະເຈົ້າຊົງໃຊ້ໃນການຟື້ນຟູ ເຊັ່ນອົງການໂອຣອລ ໂຣເບີດ
ຄະນະນິກາຍມັກຈະເກີດຂຶ້ນມາ ຈາກການຟື້ນຟູ ຫລືການຟື້ນຄວາມຈິງບາງປະການຊຶ່ງ ພະເຈົ້າໄດ້ ຊົງເປີດເຜີຍໃຫ້ເຫັນເມື່ອຜູ້ເຊື່ອມາຊຸມນຸມກັນໂດຍເນັ້ນຄວາມຈິງເຫລົ່ານີ້ ຄະນະ ທີ່ເຂົາສັງກັດ ຢູ່ນັ້ນກໍມັກຈະບໍ່ຍອມຮັບພວກເຂົາຈຶ່ງແຍກຕົວອອກມາ ແລະຕັ້ງຄະນະໃຫມ່ ຂຶ້ນເມື່ອຄວາມຈິງ ໃຫມ່ໄດ້ຮັບການເປີດເຜີຍ ຫລາຍຄັ້ງກຸ່ມທີ່ຕໍ່ຕ້ານຮຸນແຮງທີ່ສຸດຈະເປັນ ກຸ່ມທີ່ເຄີຍໄດ້ຮັບການ ສຳແດງຈາກພະເຈົ້າມາກ່ອນໜ້ານັ້ນ

## *ຂ. ຄຣິສຕະຈັກຄືອັນໃດ*

1. **ວິຫານ**ຂອງພະເຈົ້າ **- ເອເຟໂຊ 2:19-22, 1ໂກຣິນໂທ 3:16-17**

GCI

ພະເຈົ້າຊົງປະສົງທີ່ຈະສ້າງປະຊາກອນຂຶ້ນກຸ່ມນຶ່ງ ເພື່ອເປັນທີ່ສະຖິດຂອງພະວິນຍານບໍລິສຸດຂອງ ພະອົງ ເຮົາຄືສີລາທີ່ຊົງຊີວິດຊຶ່ງກຳລັງຖືກກໍ່ສ້າງຂຶ້ນເປັນນິເວດຝ່າຍວິນຍານ ເພື່ອໃຫ້ເຮົາຖວາຍ ເຄື່ອງບູຊາຝ່າຍວິນຍານທາງອົງພະເຢຊູຄຣິດຊຶ່ງເປັນທີ່ພໍພະໄທຂອງພະເຈົ້າ **1ເປໂຕ 2:4-5**

2. **<u>ຄອບຄົວ</u>**ຂອງພະເຈົ້າ

**ເອເຟໂຊ 2:19** -ເປັນພົນລະເມືອງດຽວກັນກັບທຳມະກະຊົນໃນຄອບຄົວຂອງພະເຈົ້າ
**ໂຢຮັນ 1:12-13** ໃຫ້ສິດເດດທີ່ຈະເປັນລູກຂອງພະເຈົ້າ

ຄຣິສຕະຈັກບໍ່ແມ່ນສະໂມສອນທີ່ເຮົາເປັນສະມາຊິກ ແຕ່ເຮົາເປັນຄອບຄົວເປັນວິຖີຊີວິດ

ເຮົາຕ້ອງເກີດເຂົ້າສູ່ຄອບຄົວ
ເຮົາມີບິດາອົງດຽວ
ເຮົາມີພີ່ນ້ອງຊາຍຍິງເປັນຈຳນວນຫລາຍ
ເຮົາຍອມຮັບໜ້າທີ່ຮັບຜິດຊອບໃນຖານະທີ່ເປັນສະມາຊິກຂອງຄອບຄົວ
ເຮົາຮັກ ແລະຫວ່ງໃຍສະມາຊິກຄົນອື່ນໆໃນຄອບຄົວ
ເຮົາຍອມຮັບວິໄນຂອງພະບິດາຜູ້ສະຖິດໃນສະຫວັນ
ເຮົາຕ້ອງໃຫ້ກຳເນີດລູກຫລານ - ການປະກາດພະກິດຕິຄຸນ

3. **ພະກາຍ**ຂອງພະຄຣິດ **- 1ໂກຣິນໂທ 12:27**
ພະຄຣິດຊົງເປັນສີສະ - **ເອເຟໂຊ 1:22-23**

ຄຣິສຕຽນທຸກຄົນເປັນອະໄວຍະວະໃນພະກາຍຂອງພະຄຣິດ ແຕ່ລະຄົນມີຄວາມສຳຄັນ(ຂໍ້ 26) ຖ້າອະໄວຍະວະນຶ່ງເຈັບ ທັງຕົວກໍພອຍເຈັບໄປດ້ວຍ **ເອເຟໂຊ 4:16**

4. **ເຈົ້າສາວຂ**ອງພະຄຣິດ **- ເອເຟໂຊ 5:25-32**
ຄວາມເປັນອັນນຶ່ງອັນດຽວລະຫວ່າງພະຄຣິດກັບຄຣິສຕະຈັກ ເກີດຂຶ້ນໃນການໃນການມີຄວາມສຳພັນແລະອຸທິດຕົວເຂົ້າກັນເປັນສ້ອນຕົວ
ຂໍ້25 ພະຄຣິດຊົງຮັກ
ຂໍ້25 ພະຄຣິດຊົງປະທານພະອົງເພື່ອຄຣິສຕະຈັກ
ຂໍ້26 ຊຳລະຄຣິສຕະຈັກໃຫ້ບໍລິສຸດ
ຂໍ້31-32 ພະຄຣິດກັບຄຣິສຕະຈັກເປັນນຶ່ງດຽວກັນ
ພະນິມິດ 19:7-9 ພິທີລ້ຽງໃນງານມຸງຄຸນສົມລົດຂອງພະເມສານ້ອຍ

5. **<u>ຝູງແກະ</u> ໂຢຮັນ 10:11-14, 27-28**
ຂໍ້11 ພະເຢຊູຊົງເປັນຜູ້ລ້ຽງອັນດີ ຜູ້ຊົງຍອມສະຫລະພະຊົນຊີບເພື່ອຝູງແກະ
ຂໍ້ 12 ໝາປ່າຈະຄຸບແກະ ແລະເຮັດໃຫ້ກະຈັດກະຈາຍໄປ ຄືຊາຕານ
ຂໍ້ 14 ຜູ້ລ້ຽງແກະຍ່ອມຮູ້ຈັກແກະຂອງເຂົາ ແລະແກະກໍຮູ້ຈັກເຂົາແລະຕິດຕາມເຂົາໄປ
ຂໍ້ 27 ແກະຍອມຟັງສຽງຂອງຜູ້ລ້ຽງແລະຕາມເຂົາໄປ
ເອຊາຢາ 40:11 ເໝືອນຜູ້ລ້ຽງແກະທີ່ລ້ຽງດູຝູງແກະ ແລະໂອບອຸ້ມຕົວທີ່ຍັງນ້ອຍ ໄວ້ໃນອ້ອມແຂນ

GCI

## ຄ. ຄຣິສຕະຈັກຈະຕ້ອງເປັນຢ່າງໃດ

1. **<u>ມີໄຊຊະນະ</u> ມັດທາຍ 16:15-20**

ກ) **ຂໍ້19**ຖືລູກກຸນແຈແຫ່ງແຜ່ນດິນສະຫວັນ ກຸນແຈເຮັດໜ້າທີ່ເປີດ ແລະປິດປະຕູ ເຮັດໃຫ້ຄົນເຂົ້າ ຫລືອອກໄດ້ ເຮັດໜ້າທີ່ປິດ ຫລືເປີດສິ່ງທີ່ປິດຢູ່ນັ້ນ

ຂ) ພັນທະກິດໃນການຜູກມັດ ມີອຳນາດທີ່ຈະຜູກມັດຜູ້ທີ່ຕໍ່ຕ້ານ- ບໍ່ໄດ້ໝາຍເຖິງຜູ້ຄົນ ແຕ່ເປັນເທບ ຜູ້ຄອງ ສັກດິເທບ ແລະວິນຍານຊົ່ວ

ຄ) **ມັດທາຍ 12:29** ຜູກມັດຜູ້ເຂັ້ມແຂງ ແລ້ວຈຶ່ງຍຶດຊັບໃນເຮືອນຂອງເຂົາໄປ

ງ) **ພະນິມິດ 20:2** ໃນວາລະສຸດທ້າຍ ຊາຕານຈະຖືກມັດໄວ້ເປັນເວລານຶ່ງພັນປີ (ແຕ່ພະວັດຈະນະຂອງພະເຈົ້າບໍ່ມີສິ່ງໃດເອົາໂສ້ລ່າມໄວ້ໄດ້ **2ຕີໂມທຽວ 2:9)**

ຈ) ພັນທະກິດແຫ່ງການປົດປ່ອຍ ຊາຕານຜູກມັດຊະເລີຍຂອງມັນ ແຕ່ຄຣິສຕະຈັກໄດ້ຮັບການຊົງເອີ້ນເພື່ອໃຫ້ປົດປ່ອຍພວກເຂົາ ແລະຜູກມັດອຳນາດຊົ່ວຮ້າຍທີ່ຜູກມັດພວກເຂົາ

ສ) **ໂຢຮັນ 11:44** ລາຊາໂລຕ້ອງໄດ້ຮັບການປົດປ່ອຍອອກຈາກຜ້າຫໍ່ສົບ

ຊ) ລູກາ 13:16 "ບໍ່ຄວນຫລືທີ່ເຮົາຈະຊ່ວຍຍິງຄົນນີ້ຊຶ່ງເປັນລູກຂອງອັບລາຮາມໃຫ້ພົ້ນຈາກການຜູກມັດຂອງຊາຕານ?"

ຍ) ຄຣິສຕະຈັກຊຶ່ງຢູ່ໃນໂລກຈະເຊື່ອມຕໍ່ກັບສະຫວັນ ສິ່ງໃດທີ່ຖືກຜູກມັດໃນໂລກຈະຖືກຜູກມັດໃນສະຫວັນດ້ວຍ ສິ່ງໃດທີ່ປົດປ່ອຍໃນໂລກກໍຈະຖືກປົດປ່ອຍໃນສະຫວັນ ຄຣິສຕະຈັກຕ້ອງການພະໄທຂອງພະຄຣິດຜູ້ເປັນສີສະຂອງພະກາຍ

2. **<u>ເປັນນ້ຳນຶ່ງໃຈດຽວກັ</u>ນ ໂຢຮັນ 17:20-23**

ພະເຢຊູອະທິຖານເພື່ອໃຫ້ເຮົາເປັນອັນນຶ່ງອັນດຽວກັນ ເພື່ອຊາວໂລກຈະໄດ້ເຊື່ອວ່າພະເຈົ້າໄດ້ສົ່ງພະເຢຊູເຂົ້າມາໃນໂລກ

**ຂໍ້ 21** - ພະອົງຊົງເຫັນລ່ວງໜ້າວ່າຈະມີການແຕກແຍກ
**ຂໍ້ 22** - ປະທານພະສີຣິແກ່ເຮົາ ເພື່ອເຮົາຈະໄດ້ເປັນອັນນຶ່ງອັນດຽວກັນ
**ຂໍ້ 23** - ຈະໄດ້ເປັນນຶ່ງດຽວກັນຢ່າງສົມບູນ ເພື່ອໂລກຈະໄດ້ຮູ້ວ່າພະເຈົ້າໄດ້ສົ່ງພະເຢຊູມ
**ຂໍ້11-12-** ເປັນນຶ່ງດຽວກັນໃນພະນາມຂອງພະເຈົ້າ ບໍ່ແມ່ນໃນນາມຂອງຄະນະນິກາຍ ເປັນນາມຂອງຄອບຄົວ ຄືຄອບຄົວຂອງພະເຈົ້າ
**ຂໍ້14,17,20-**ເປັນນຶ່ງດຽວກັນໃນພະວັດຈະນະ ພະວັດຈະນະເປັນຄວາມຈິງບໍ່ແມ່ນພະວັດຈະນະທີ່ແບ່ງແຍກກັນໂດຍຫລັກຄຳສອນ
**ຂໍ້ 22,24-** ເປັນນຶ່ງດຽວກັນໃນພະສີຣິຂອງພະເຈົ້າ ບໍ່ແມ່ນສະຫງ່າລາສີຂອງມະນຸດ ຫລືນິກາຍ ຫລືອົງກອນ

GCI

**ຂໍ້ 26** – ເປັນນຶ່ງດຽວກັນໃນຄວາມຮັກຂອງພະເຈົ້າ ພະເຈົ້າຊົງເປັນຄວາມຮັກ **ໂຢຮັນ 3:16**– ຄວາມຮັກຄືການໃຫ້

**ຄຣິສຕະຈັກໃນຍຸກທຳອິດ**

**ກິດຈະການ 1:14** – ຮ່ວມໃຈກັນອະທິຖານດ້ວຍຄວາມເປັນອັນນຶ່ງອັນດຽວກັນເລື້ອຍໄປ
**ກິດຈະການ 2:46** – ຢູ່ໃນວິຫານດ້ວຍຄວາມເປັນນ້ຳນຶ່ງໃຈດຽວກັນເລື້ອຍໄປ
**ກິດຈະການ 4:32** – ມີຫົວໃຈແລະຈິດໃຈດຽວກັນ
**ກິດຈະການ 5:12** – ທຸກຄົນມີຄວາມເປັນນ້ຳນຶ່ງໃຈດຽວກັນ
**ກິດຈະການ 8:6** –ຝູງຊົນຕ່າງຟັງສິ່ງທີ່ຟີລິບເວົ້າດ້ວຍຄວາມເປັນນ້ຳນຶ່ງໃຈດຽວກັນ
**ເພັງສັນລະເສີນ 133** – ເມື່ອພີ່ນ້ອງອາໃສຢູ່ໃນທີ່ແຫ່ງດຽວກັນດ້ວຍຄວາມເປັນນ້ຳ ນຶ່ງໃຈດຽວ ພະເຈົ້າຊົງບັງຄັບບັນຊາພະພອນທີ່ນັ້ນ

ເຮົາເຫັນສິ່ງເຫລົ່ານີ້ໃນຄຣິສຕະຈັກຍຸກປະຈຸບັນນີ້ຫລືບໍ່?

3. **<u>ມີສະຫງ່າລາສີ</u> ເອເຟໂຊ 5:23–32**

ການສຳແດງທີ່ໂປໂລໄດ້ຮັບເລື່ອງທີ່ຄຣິສຕະຈັກເປັນເຈົ້າສາວຂອງພະຄຣິດ ສະແດງໃຫ້ເຫັນວ່າ ພະເຈົ້າຊົງສົນພະໄທໃນຄຣິສຕະຈັກ

**ຂໍ້ 26** – ບໍລິສຸດ ຄື ສັກສິ ແຍກຕົວຖວາຍແດ່ພະເຈົ້າ
**ຂໍ້ 26** – ໄດ້ຮັບການຊຳລະ ໂດຍນ້ຳແຫ່ງພະວັດຈະນະ
**ຂໍ້ 27** – ມີສະຫງ່າລາສີ ສວມທັບດ້ວຍພະສິລິ ແລະເຮັດໃຫ້ພະຄຣິດມີພະສິລິ
**ຂໍ້ 27** – ປັດສະຈາກຕຳນິ ຫລືຮອຍ ຄືເຄື່ອງບູຊາໃນພັນທະສັນຍາເດີມ
**ຂໍ້ 27** – ບໍລິສຸດ ປັດສະຈາກທີ່ຕິ ແຍກຕົວຈາກຄວາມບາບ

ຄຣິສຕະຈັກເປັນເໝືອນພະຄຣິດ ເພື່ອພະອົງຈະໄດ້ເຂົ້າສະນິດເປັນນຶ່ງດຽວກັນກັບຄຣິສຕະຈັກໄດ້ໂດຍບໍ່ເປັນ ການເຂົ້າທຽມແອກທີ່ບໍ່ສົມກັນ ໃນວັນສົມລົດຂອງພະເມສານ້ອຍ

## ງ. *ຄວາມສຳຄັນຂອງຄຣິສຕະຈັກ*

1. ເປັນພາຊະນະທີ່ສຳແດງພະລັກສະນະຂອງພະຄຣິດ **ເອເຟໂຊ 3:10**

"ປະສົງຈະໃຫ້ບັນດາເທບຜູ້ຄອງ ແລະສັກດິເທບໃນສະຫວັນຮູ້ຈັກປັນຍາອັນຊັບຊ້ອນຂອງພະເຈົ້າ ທາງຄຣິສຕະຈັກບັດນີ້ "ພະເຢຊູໄດ້ຊົງມອບຖວາຍຕົວເພື່ອຄຣິສຕະຈັກໃນພະທຳ**ໂຢຮັນ 20:21** "ພະບິດາຊົງໃຊ້ເຮົາມາສັນໃດ ເຮົາກໍໃຊ້ທ່ານທັງຫລາຍໄປສັນນັ້ນ"

2. ເປັນວິທີການຂອງພະຄຣິດໃນການຖວາຍກຽດແດ່ພະບິດາ – **ເອເຟໂຊ 3:21**

"ຂໍພະກຽດຈົ່ງມີແດ່ພະອົງ ໃນຄຣິສຕະຈັກ ໂດຍທາງພະຄຣິດ ຕະຫລອດໄປເປັນນິດ"

**ຄຣິສຕະຈັກໄດ້ຮັບສິດທິພິເສດ ເພື່ອຈະໄດ້ຖວາຍສັນລະເສີນແດ່ພະບິດາ ແລະສຳແດງເຖິງພະລັກສະນະອັນຊົງພະສິລິ ແລະລິດເດດຂອງພະອົງ**

3. ເປັນຜູ້ທີ່ພະຄຣິດ**ຊົງຮັກ ເອເຟໂຊ 5:25**

GCI

"ຝ່າຍສາມີຈົ່ງຮັກພັນລະຍາຂອງຕົນ ເໝືອນພະຄຣິດຊົງຮັກຄຣິສຕະຈັກ ແລະໄດ້ຊົງປະທານ ພະອົງ ເອງ ເພື່ອຄຣິສຕະຈັກ" ຄວາມຮັກສຳແດງອອກມາເປັນການກະທຳ ບໍ່ແມ່ນທາງຄຳເວົ້າ
**ໂຢຮັນ 3:10**

4. ຄຣິສຕະຈັກເປັນສົມບັດຂອງ<u>ພະຄຣິດ</u> **- ເອເຟໂຊ 5:27**

"ເພື່ອຈະໄດ້ຖວາຍຄຣິສຕະຈັກທີ່ມີສະຫງ່າລາສີແດ່ພະອົງ" **ພະນິມິດ 4:11**

ເມື່ອເຮົາເບິ່ງປະຫວັດຄຣິສຕະຈັກອັນຕ່ຳຕ້ອຍ ແລະເບິ່ງເຫັນຄວາມອ່ອນແອຂອງເຮົາ ໃນການພະ ຍາ ຍາມເປັນຕົວແທນຂອງພະຄຣິດເທິງໂລກ ຂໍໃຫ້ເຮົາຮູ້ວ່າພະປະສົງຂອງພະເຈົ້າຈະສຳເລັດເປັນ ຈິງຜ່ານ ທາງຄຣິສຕະຈັກ

**ພະອົງຊົງວາງແຜນໃຫ້ມີຄຣິສຕະຈັກ**
**ພະອົງວາງຮາກຖານຂອງຄຣິສຕະຈັກ**-ພະເຢຊູຊົງເປັນສີລາຫົວມຸມເອກ ແລະບັນດາອັກຄະສາວົກ
**ພະອົງຊົງສະຖາປະນາຄຣິສຕະຈັກໄວ້**-ອັນເພັນເຕຄອດ ແລະພັນທະກິດຂອງພະອົງ
**ພະອົງຈະຊົງກະທຳໃຫ້ສຳເລັດ** - ໂດຍທາງລິດເດດຂອງພະວິນຍານບໍລິສຸດ

## III. ຜູ້ນຳຄຣິສຕະຈັກ

**1ຕີໂມທຽວ 3:2-7**

### *ກ. ຄຸນສົມບັດ*

1. **ໄດ້ຮັບການເອີ້ນ**ຈາກພະເຈົ້າ ໂຮງຮຽນພະຄຳພີເສີມສ້າງເຮົາໄດ້ ຄຣິສຕະຈັກອາດໃຫ້ໂອກາດເຮົາ ໄດ້ຮັບໃຊ້ ແຕ່ມີພຽງພະເຈົ້າເທົ່ານັ້ນທີ່ຊົງເອີ້ນເຮົາໄດ້ຖ້າບໍ່ໄດ້ຮັບການຊົງເອີ້ນເຮົາກໍບໍ່ມີອັນໃດເປັນ
ເຄື່ອງຍຶດໝັ້ນໃນຍາມຍາກລຳບາກ ບາງຄົນອາດເຮັດເພາະເປັນງານອາຊີບແຕ່ຜູ້ນຳຄືຜູ້ທີ່ໄດ້ ຮັບການ ຊົງເອີ້ນຈາກພະເຈົ້າ

2. **1ຕີໂມທຽວ 3:2**
ບໍ່ມີອັນໃດໃນບຸກຄະລິກລັກສະນະຊຶ່ງຄົນຈະກ່າວຫາໄດ້ ບໍ່ໄດ້ໝາຍຄວາມວ່າເປັນຄົນສົມບູນແບບ ແຕ່ເປັນແບບຢ່າງໃນການດຳເນີນຊີວິດຕາມທາງພະເຈົ້າເພື່ອໃຫ້ຄຣິສຕະຈັກໄດ້ປະພຶດຕາມ
**ດານຽນ 6:4 -** ບໍ່ມີເຫດອັນໃດທີ່ຈະກ່າວໂທດທ່ານໄດ້

3. ບົດ 3:2 -"ເປັນສາມີຂອງຍິງຄົນດຽວ"

ບໍລິສຸດໃນທາງເພດ ມີໃຈດຽວຕໍ່ພັນລະຍາ ຖ້າເປັນໂສດ ກໍຕ້ອງບໍ່ແມ່ນໜຸ່ມເນື້ອຫອມ

4. ບົດ 3:2 - "ຮູ້ຈັກບັງຄັບຕົນ"

GCI

ບໍ່ແມ່ນຄົນຟູ່ງເຟີຍ ມີຄວາມຄິດແຈ່ມຊັດ ມີການວິນິດໄສທີ່ມີເຫດຜົນ ໃນສະໄຫມພະຄຳພີ ນ້ຳອະງຸ່ນເປັນພຽງຂອງແຫລວຊະນິດນຶ່ງ ຕ້ອງປະສົມນ້ຳລ້າເພື່ອເຮັດໃຫ້ໝົດລິດເຫລົ້າ ຂໍ້ນີ້ຍັງໝາຍເຖິງການກິນຫລາຍເກີນໄປ ການຟູ່ງເຟີ້ໃນຄວາມສະໜຸກສະໜານເກີນໄປ

5. **ບົດ 3:2 -**
"ມີສະຕິສຳປະສັນຍະ"

6. **ບົດ 3:2 -**
"ເປັນທີ່ນັບຖື "

7. **ບົດ 3:2 -**
"ມີນ້ຳໃຈຮັບຮອງແຂກ"

8. **ບົດ 3:2 -**
ມີຄວາມສາມາດໃນການສອນ"
ຄຸນສົມບັດຂໍ້ນີ້ເຮັດໃຫ້ຜູ້ປົກຄອງແຕກຕ່າງຈາກນັກຄະນາຍົກ ນັກຄະນາຍົກບໍ່ໄດ້ກຳນົດຄຸນສົມບັດຂໍ້ນີ້ໄວ້ ຜູ້ສອນຕ້ອງປະພຶດປະຕິບັດຕາມສິ່ງທີ່ຕົວເອງສັ່ງສອນນັ້ນ **1ໂກຣິນໂທ11:1**

9. **ບົດ 3:3 -**
"ບໍ່ຕິດເຫລົ້າ"

10. **ບົດ 3:3 -**
"ບໍ່ເປັນນັກເລງ"

11. **ບົດ3:3 -**
"ເປັນຄົນສຸພາບ"
ເຂົ້າໃຈຜູ້ອື່ນຍົກໂທດໃຫ້ຜູ້ທີ່ເຮັດຜິດໄດ້ງ່າຍ ບໍ່ມັກຈົດຈຳຄວາມຜິດທີ່ຄົນອື່ນເຮັດຕໍ່ຕົວເອງ ບໍ່ເອົາຄວາມຜິດຂອງຄົນອື່ນໄປເວົ້າຫລືຄິດ

12. **ບົດ3:3 -**
"ບໍ່ມັກທະເລາະວິວາດ"

13. **ບົດ 3:3 -**
"ເປັນອິດສະຫລະຈາກຄວາມຮັກເງິນ"
ບໍ່ໄດ້ຮັບຕຳແນ່ງໃນຄຣິສຕະຈັກເພາະເງິນດີ ການຮັກເງິນເປັນບໍ່ເກີດຂອງຄວາມຊົ່ວທັງປວງ

14. **ບົດ3:4-5**
"ປົກຄອງດູແລຄອບຄົວຂອງຕົນເອງໄດ້ດີ" "ລູກເຊື່ອຟັງຢູ່ໃນໂອວາດ" - ຄອບຄົວຂອງຜູ້ນຳຕ້ອງມີລະບຽບຮຽບຮ້ອຍ ຄອບຄົວຄືສິ່ງສຳຄັນອັນດັບນຶ່ງ ຖ້າຊາຍໃດບໍ່ຮູ້ຈັກດູແລຄອບຄົວຂອງຕົນເອງໃຫ້ມີລະບຽບເຂົາຈະປົກຄອງດູແລຄຣິສຕະຈັກຂອງພະເຈົ້າໄດ້ຢ່າງໃດ? ຄອບຄົວຂອງເຂົາຕ້ອງເປັນແບບຢ່າງແກ່ບັນດາຜູ້ເຊື່ອບາງຄົນຖິ້ມຄອບຄົວ ເລື່ອງນີ້ລວມທັງການຈັດການດ້ານ ການເງິນໃນຄອບຄົວ ແລະການລ້ຽງດູຄອບຄົວດ້ວຍ ຖ້າມີລູກ ລູກຕ້ອງເປັນຜູ້ທີ່ໃຫ້ຄວາມເຄົາລົບຕໍ່ບິດາ ຕ້ອງເຊື່ອຟັງ ແລະເຊື່ອໃນສິ່ງທີ່ບິດາສອນຖ້າຄອບຄົວຂອງຜູ້ນຳຫຍຸ້ງເຍີງວຸ້ນວາຍ ເຂົາກໍບໍ່ເໝາະທີ່ຈະເປັນຜູ້ນຳຄຣິສຕະຈັກ

15. ບົດ3:6-"ບໍ່ແມ່ນຜູ້ທີ່ເຊື່ອໃຫມ່" -
ຕ້ອງມີຄວາມເປັນຜູ້ໃຫຍ່ຝ່າຍວິນຍານຍານຫລາຍກວ່າສະມາຊິກຄຣິສຕະຈັກ ສະມາຊິກຄຣິສຕະຈັກຈະເຕີບໃຫຍ່ໄດ້ເທົ່າລະດັບຄວາມຈະເລີນເຕີບໃຫຍ່ຂອງຜູ້ນຳເທົ່ານັ້ນ ເຫດຜົນ -ເຂົາຈະເກີດຄວາມເຍີ່ຍິ່ງຂຶ້ນ
ຊາຕານລົ້ມລົງ ເພາະຄວາມຍິ່ງຖ້າເປັນຄຣິສຕະຈັກທີ່ກໍ່ຕັ້ງໃຫມ່ອາດຈະໃຫ້ຄຣິສຕຽນໃຫມ່ເປັນຜູ້ນຳກໍໄດ້ ແຕ່ເຂົາຕ້ອງມີຄວາມເປັນຜູ້ໃຫຍ່ຫລາຍກວ່າສະມາຊິກຄົນອື່ນໆ

GCI

16. **ບົດ3:7-**"ມີ
ຊື່ສຽງໃນສາຍຕາຂອງຄົນທີ່ຢູ່ພາຍນອກ"
-ຄົນທີ່ບໍ່ເປັນຄຣິສຕຽນເຫັນໄດ້ວ່າເຂົາເປັນຄົນຊື່ຕົງມີຄວາມຮັກ ມີໃຈກະລຸນາ ແລະຮັກສັນຕິ ພວກເຂົາອາດຈະບໍ່ເຫັນດ້ວຍກັບສິ່ງທີ່ຜູ້ນຳເທດສະນາ ແຕ່ກໍບໍ່ພົບຄວາມຜິດໃນການດຳເນີນຊີວິດຂອງເຂົາ

ຄຸນສົມບັດເຫລົ່ານີ້ ຄອບຄຸມເຖິງຊີວິດຂອງເຂົາໃນດ້ານ **ຝ່າຍວິນຍານ**

**ຊີວິດສ່ວນຕົວ**

**ຊີວິດຄອບຄົວ**

**ງານພັນທະກິດ**

17. ໃນພັນທະສັນຍາໃຫມ່ ພະເຈົ້າຊົງຕັ້ງງານຮັບໃຊ້ສອງຢ່າງໄວ້ໃນຄຣິສຕະຈັກ - ຜູ້ປົກຄອງ ແລະມັກຄະນາຍົກ ຫລືຜູ້ອາວຸໂສຄືຜູ້ທີ່ເຮັດໜ້າທີ່ປົກຄອງດູແລສ່ວນມັກຄະນາຍົກເຮັດໜ້າທີ່ປົນນິ ບັດຮັບໃຊ້

ກ) **ຜູ້ປົກຄອງ** ໃນພັນທະສັນຍາເດີມຜູ້ປົກຄອງຄືຜູ້ອາວຸໂສ ໃນພັນທະສັນຍາໃຫມ່ມີຄຳທີ່ໃຊ້ຢູ່ ່ສອງຄຳຄື- ຜູ້ອາວຸໂສ ແລະບິຊອພ ຜູ້ອາວຸໂສ ຄືຜູ້ທີ່ອາຍຸຫລາຍສ່ວນບິຊອພຄືຜູ້ທີ່ເຮັດໜ້າທີ່ໃນການປົກຄອງດູແລ ຄອຍເອົາໃຈໃສ່ດູແລໃນເລື່ອງຝ່າຍວິນຍານຂອງ ຄຣິສຕະຈັກ ແລະເຮັດໜ້າທີ່ສອດສ່ອງດູແລຄຣິສຕະຈັກອາດຈະກ່າວໄດ້ວ່າຜູ້ອາວຸໂສ ຫລື ຜູ້ປົກຄອງຄືຕົວຄົນສ່ວນບິ ຊອພ ຄືຕຳແໜ່ງຂອງເຂົາ

ບົດບາດໜ້າທີ່ຂອງຜູ້ປົກຄອງຄື

(1) ເຮັດໜ້າ**ທີ່ເປັນຜູ້ນຳຄ**ຣິສຕະຈັກ
(2) ໃ**ຫ້ທິດທາງ**ແກ່ຄຣິສຕະຈັກ
(3) **ດູແລເອົາໃຈໃສ່**ຜູ້ເຊື່ອ
(4) **ສັ່ງສອນ**ຜູ້ເຊື່ອ
(5) ປົກປ້ອງຜູ້ເຊື່ອ**ຈາກຄຳສອນຜິດ**

ຂ) **ມັກຄະນາຍົກ** -"ຜູ້ຮັບໃຊ້ຂອງຄົນທັງປວງ" ໂດຍທົ່ວໄປຈະຮັບໃຊ້ໃນໜ້າທີ່ດ້ານນຶ່ງດ້ານໃດໂດຍສະເພາະ ເຊັ່ນການຢ້ຽມຢາມພັນທະກິດເດັກ ພັນທະກິດອະນຸຊົນ ງານບໍລິຫານ ຈັດການມັກຄະນາຍົກຕ້ອງຢູ່ພາຍໃຕ້ອຳນາດຂອງຜູ້ປົກຄອງ ບໍ່ໄດ້ມີໜ້າທີ່ຈັດຈ້າງ ຫລືໃຫ້ສິດຍາພິບານອອກຈາກງານ ບໍ່ໄດ້ມີໜ້າທີ່ປົກຄອງຄຣິສຕະຈັກນັ້ນຄືໜ້າທີ່ຂອງຜູ້ປົກຄອງບໍ່ໄດ້ມີ ການຊົງເອີ້ນໃຫ້ເທດສະນາ ແຕ່ອາດຈະເປັນໄປໄດ້ທີ່ຈະເທດສະນາ

## *ຂ. ພັນທະກິດທີ່ເປັນຮາກຖານ*

1. **ອັກຄະສາວົກ - ເອເຟໂຊ 4:11** "ຜູ້ທີ່ຖືກສົ່ງໄປ"

ກ) ມີນ້ຳໃຈແບບ**ຜູ້ຮັບໃຊ້**
ຂ) **ມີສິດທິອຳນາດ**ຝ່າຍວິນຍານຊຶ່ງເປັນທີ່ຍອມຮັບຂອງຄົນທົ່ວໄປ
ຄ) **ເປັນພໍ່**ຝ່າຍວິນຍານ
ງ) ມີຄວາມຮູ້ **ຄວາມເຂົ້າໃຈ** ແລະປັນຍາໃນພະວັດຈະນະຂອງພະເຈົ້າ

GCI

ຈ) ມີ**ຄວາມຖ່ອມໃຈ** ເບິ່ງໝາມໃນເນື້ອໜັງຂອງໂປໂລ

ສ) **ມີຄວາມອົດທົນ 2ໂກຣິນໂທ 12:12**

ຊ) ເປັນຜູ້ນຳຊຶ່ງຄົນອື່ນຕ້ອ**ງການຕິດຕາມ**

ຍ) ສຳແດງ**ຄວາມຮັກ**

**ພັນທະກິດ**

(1) **ກໍ່ຕັ້ງຄ**ຣິສຕະຈັກ – ເປັນຜູ້ບຸກເບີກ
(2) **ເທດສະນາ** ແລະ**ສັ່ງສອ**ນພະວັດຈະນະຂອງພະເຈົ້າ
(3) ມີຂອງປະທານຂອງພະວິນຍານ**ສຳແດງ**ໃນພັນທະກິດ
(4) ແຕ່ງຕັ້ງ ແລະສະຖາປະນາ**ຜູ້ຮັບໃຊ້**ພະເຈົ້າໃນງານຕ່າງໆ
(5) ຝຶກ**ອົບຮົມຜູ້ນຳຊຶ່ງມີ**ສັກກະຍະພາບ
(6) ມີນິມິດສຳລັບຄຣິສຕະຈັກສາກົນ ບໍ່ແມ່ນຄຣິສຕະຈັກທ້ອງຖິ່ນແຫ່ງນຶ່ງແຫ່ງໃດ
(7) ມີ**ຄວາມຫວ່ງໃຍ**ໃນຄຣິສຕະຈັກຕ່າງໆ ທີ່ຕົນເອງກໍ່ຕັ້ງຂຶ້ນ
(8) ຄວນຈະປະຈຳຢູ່ໃນຄ**ຣິສຕະຈັກທ້ອງຖິ່ນ**ແຫ່ງນຶ່ງແຫ່ງໃດ

ໂປໂລ ຄືຕົວຢ່າງທີ່ດີຂອງອັກຄະສາວົກ

2. ຜູ້ເຜີຍພະວັດຈະນະ – **ເອເຟໂຊ 4:11**, – "ຜູ້ປ່າວປະກາດ" – ກ່າວຖ້ອຍຄຳ ແທນ ພະເຈົ້າ

ຕົວຢ່າງ ເຢເລມີ: **1ໂກຣິນໂທ 12:28**

ກ) **ທຳນວາຍ** ສິ່ງຊຶ່ງຈະເກີດຂຶ້ນໃນອານາຄົດ

ຂ) **ກ່າວ** ເຖິງພະດຳລິຂອງພະເຈົ້າແກ່ປະຊາກອນຂອງພະອົງ ໂດຍການໜູນໃຈ ປອບໂຍນ ເສີມສ້າງເຂົາຂຶ້ນ ແລະບາງຄັ້ງຕັກເຕືອນມີຫລາຍຄົນທີ່ເຜີຍພະວັດຈະນະໄດ້ແຕ່ບໍ່ໄດ້ເປັນຜູ້ເຜີຍພະວັດຈະນະນີ້ເປັນພັນທະກິດທີ່ພະເຈົ້າຊົງໂປດປະທານໃຫ້

3. ຜູ້ເຜີຍແພ່ຂ່າວປະເສີດ **– ເອເຟໂຊ 4:11** – "ຜູ້ນຳຂ່າວດີ"

ຕົວຢ່າງ ຟີລິບບອຍ – **ກິດຈະການ8:5–7** ປະກາດພະເຢຊູມີຝູງຊົນມາຟັງມີໝາຍສຳຄັນ ແລະການອັດສະຈັນຕິດຕາມການເທດສະນາປຽບທຽບກັບ **ມາຣະໂກ 16:17–18** ໃຫ້ບັບຕິດສະມາແກ່ຜູ້ເຊື່ອໃຫມ່
ການປະກາດໃນທີ່ສາທາລະນະ – ເຊັ່ນ ບີນລີ່ ເກຣແຮມ
– **ກິດຈະການ 8:35–38** ການປະກາດເປັນສ່ວນຕົວ – ຟີລິບ

ໄວຕໍ່ສຽງຂອງພະເຈົ້າ ແລະເຮັດຕາມ
ກ້າເປັນພະຍານຕໍ່ຜູ້ມີອຳນາດສູງ
ຮູ້ຈັກຂໍ້ພະຄຳພີດີ ແລະເທດສະນາໄດ້
ປະກາດພະຄຣິດ ບໍ່ແມ່ນຫລັກຄຳສອນ
ໃຫ້ບັບຕິດສະມາໃນນ້ຳແກ່ຜູ້ເຊື່ອໃຫມ່

GCI

ທຸກຄົນໄດ້ຮັບການຊົງເອີ້ນໃຫ້ປະກາດພະກິດຕິຄຸນ ແຕ່ບໍ່ແມ່ນທຸກຄົນທີ່ມີຂອງ ປະທານເປັນຜູ້ເຜີຍແຜ່ຂ່າວປະເສີດ

4. ສິດຍາພິບານ – **ເອເຟໂຊ 4:11-**

"ຜູ້ລ້ຽງແກະ" ຕ້ອງມີນ້ຳໃຈແບບຜູ້ລ້ຽງເພື່ອເອົາໃຈໃສ່ດູແລຝູງ ແກະ – **ໂຢຮັນ 10**

ກ) ລູກແກະຈຳສຽງຂອງເຂົາໄດ້- **<u>ສຽງ</u>**ຂອງພະວິນຍານ
ຂ) ໄ**<u>ວຕໍ່</u>**ຄວາມຕ້ອງການຂອງລູກແກະ ແລະຢູ່ບ່ອນດຽວກັນກັບລູກແກະ
ຄ) **ເອີ້ນຊື່ລູກ**ແກະ – ມີການຕິດຕໍ່ເປັນສ່ວນຕົວ
ງ) ນຳລູກແກະໄປສູ່ທົ່ງຫຍ້າຂຽວສົດແຫ່ງພະວັດຈະນະຄອຍສອດສ່ອງຫາທົ່ງຫຍ້າໃຫມ່ຢູ່ສະເໝີ
ຈ) ເປັນຜູ້ນຳລູກແກະ ແລະລູກແກະຍິນດີເດີນຕາມເພາະເຂົານຳໂດຍການເປັນແບບ ຢ່າງ
ສ) ມີຄວາມຮັກ ແລະເອັນດູສົງສານລູກແກະ
ຊ) ດູແລລູກແກະດ້ວຍຄວາມຫວ່ງໃຍ
ຍ) ນຳການບຳບັດຮັກສາມາສູ່ລູກແກະ ເສາະຫາຕົວທີ່ຫລົງຫາຍ
ດ) ບໍ່ປົກຄອງລູກແກະໂດຍການບີບບັງຄັບ ແຕ່ດ້ວຍຄວາມຮັກ
ຕ) ປົກປ້ອງລູກແກະຈາກສັດຕູ
ຖ) ບໍ່ກ່າວຖ້ອຍຄຳທີ່ເຮັດໃຫ້ລູກແກະກະຈັດກະຈາຍໄປ

5. **ອາຈານ – ເອເຟໂຊ4:11 –** "ສັ່ງສອນ ໃຫ້ຄວາມຮູ້"

ກ) ຄວນເປັນຜູ້ໄຝ່ສຶກສາພະວັດຈະນະ
ຂ) ຄວນຈະພາວັນນາພະຄຳພີ ຊຶ່ງເຮັດໃຫ້ເກີດຄວາມສະຫວ່າງ
ຄ) ຄວນເປັນຄົນພ້ອມຮັບຄຳສອນ – ມີໃຈພ້ອມທີ່ຈະຮຽນຮູ້ຢູ່ສະເໝີ
ງ) ຄວນຮູ້ຈັກວິທີສຶກສາພະຄຳພີ
ຈ) ຄວນຈະມີຄວາມຄິດສ້າງສັນໃນການສັ່ງສອນ – ພະເຢຊູຊົງໃຊ້ການເລົ່າເລື່ອງ, ການສອນໃນບ່ອນກາງແຈ້ງ ການຍ່າງສອນໄປຕາມຖະໜົນ
ສ) ຄວນດຳເນີນຊີວິດຕາມສິ່ງທີ່ຕົນເອງສອນ

# IV. ບົດບາດຂອງຄຣິສຕະຈັກ ແລະສະມາຊິກ

## ກ. ບົດບາດຂອງຄຣິສຕະຈັກ

1. ສັນລະເສີນແລະນະມັດສະການ
2. ອະທິຖານແລະອົດອາຫານ
3. ເທດສະນາພະວັດຈະນະ
4. ສ້າງຜູ້ເຊື່ອໃຫ້ເປັນສາວົກ
5. ສັ່ງສອນພະວັດຈະນະ
6. ປະກາດພະກິດຕິຄຸນ

GCI

7. ພັນທະກິດ – ມັດທາຍ 28:18–20
8. ການຢ້ຽມຢາມ – ຜູ້ປ່ວຍ, ໃນໂຮງໝໍ
9. ພິທີກຳ – ຄຳບັນຊາ

ກ) **<u>ພິທີບັບຕິດສະມາ</u>**ໃນນ້ຳ – "ການຈຸ່ມ"

(1) ເຊື່ອຟັງຄຳບັນຊາຂອງພະເຢຊູ **– ມາຣະໂກ 16:16, – ມັດທາຍ 28:16–20**
(2) ພະເຢຊູຊົງວາງແບບຢ່າງໄວ້
(3) ສຳລັບຜູ້ທີ່ເຊື່ອແລ້ວເທົ່ານັ້ນ – ພິທີບໍ່ໄດ້ເຮັດໃຫ້ໃຜເປັນຄຣິສຕຽນ
(4) ເຂົ້າສ່ວນໃນການສິ້ນພະຊົນ ການຖືກຝັງ ແລະການເປັນຂຶ້ນຈາກຄວາມຕາຍຂອງພະເຢຊູ
(5) ເປັນຈຸດທີ່ຕັດຂາດຈາກຊີວິດເກົ່າ ແລະເປັນຂຶ້ນມາສູ່ຊີວິດໃຫມ່
(6) **ມັດທາຍ 28:18–20** – ບັບຕິດສະມາໃນພະນາມພະບິດາ ພະບຸດ ແລະພະວິນຍານບໍລິສຸດ ຕຣີເອກກະນຸພາບປະທັບໃນການບັບຕິດສະມາຂອງພະເຢຊູ –ພະບິດາຕັດ,ພະວິນຍານສະເດັດມາປະທັບເທິງພະອົງ
(7) **ກິດຈະການ 8:12** –ຟີລິບ ກັບຂຸນນາງອັນຕີໂອເຊັຽເມື່ອເຂົາເຊື່ອເຂົາຈຶ່ງປະກອບພິທີບັບຕິດສະມາ- ເມື່ອເຂົາເຊື່ອ

ຂ) ພິທີມະຫາສະນິດ – ການຮ່ວມໂຕະກັບອົງພະຜູ້ເປັນເຈົ້າ

(1) **ມັດທາຍ 26:26-27**, **1ໂກຣິນໂທ 11:23–3** – ພະເຢຊູບັນຊາໃຫ້ເຮັດພິທີນີ້ເພື່ອລະລຶກເຖິງພະອົງ
(2) ເຂົ້າໜົມປັງເລັ່ງເຖິງພະກາຍ,ນ້ຳອະງຸ່ນເລັ່ງເຖິງພະໂລຫິດ–ເຮົາຮັບຊີວິດຂອງພະອົງ
(3) ເປັນເຄື່ອງໝາຍວ່າພະກາຍຂອງພະຄຣິດໂດຍລວມກຳລັງຮ່ວມສາມັກຄີທຳກັນ
(4) ສາມາດເຮັດໃນການປະຊຸມຕາມບ້ານ ໃນຄອບຄົວ ຮ່ວມກັບເພື່ອນໆ ແລະໃນການ ປະຊຸມນະມັດສະການ
(5) "ຈົ່ງກະທຳເລື້ອຍໆ ເພື່ອເປັນທີ່ລະລຶກເຖິງເຮົາ" – ບໍ່ໄດ້ບອກວ່າເລື້ອຍເທົ່າໃດ ແລ້ວແຕ່ຄຣິສຕະຈັກ

ຄ) ພິທີສົມລົດ ແລະພິທີກຳ

## *ຂ. ບົດບາດຂອງສະມາຊິກຄຣິສຕະຈັກ*

1. ເຊື່ອມສຳພັນກັບສະມາຊິກຄົນອື່ນຢ່າງຖືກຕ້ອງ
   ກ) **ໂຣມ 15:7** – ຕ້ອງ**ຍອມຮັບຊຶ່ງກັນ**ແລະກັນເໝືອນພະຄຣິດຍອມຮັບເຮົາ
   ຂ) **ໂກໂລຊາຍ 3:12–14** – ຜ່ອນໜັກຜ່ອນເບົາຕໍ່ກັນແລະກັນ
   **ຍົກໂທດໃຫ້ກັ**ນ
   ແຕ່ລະຄົນມີຄວາມອົດທົນບໍ່ເທົ່າກັນ
   ຄ) ພະເຈົ້າຊົງຈັດຕຽມພັນທະກິດແບບ "ກະດາດຊາຍ"
   ງ) ເຮົາຕ້ອງການຊຶ່ງກັນແລະກັນ – ອະໄວຍະວະໃນພະກາຍຕ້ອງເຮັດວຽກຮ່ວມກັນ
   ຈ) ຄວາມຈະເລີນ ແລະພັດທະນາການສ່ວນໃຫຍ່ເກີດຂຶ້ນຈາກການມີຄວາມສຳພັນກັບຄຣິສຕຽນຄົນອື່ນ
   ສ) **1ເທຊະໂລນິກ 5:11** – ຕ້ອງໜູນໃຈ ແລະເສີມສ້າງກັນແລະກັນໃຫ້ມີຄວາມຮັກແລະເຮັດຄວາມດີ

GCI

ຊ) **ເຮັບເລີ 10:24** – ພິຈາລະນາເບິ່ງວ່າຈະເຮັດຢ່າງໃດຈຶ່ງຈະປຸກໃຈກັນໃຫ້ມີຄວາມຮັກແລະເຮັດຄວາມດີ

ຍ) **ຟີລິບບອຍ2:3–4** – ຖືວ່າຜູ້ອື່ນດີກວ່າຕົນເອງ ບໍ່ເຫັນແກ່ປະໂຫຍດຂອງຕົນເອງຝ່າຍດຽວ ຕ້ອງເຫັນແກ່ຜົນປະໂຫຍດຂອງຜູ້ອື່ນດ້ວຍ

2. ຍອມຢູ່ໃຕ້ອຳນາດຂອງຜູ້ນຳ – **ເຮັບເລີ 13:17**

ກ) ຍອມຟັງຄຳແນະນຳສັ່ງສອນຂອງຜູ້ນຳດ້ວຍຄວາມຖ່ອມໃຈ ຕົວຢ່າງ.. ການສົມລົດ

ຂ) ນັບຖືຜູ້ນຳ

ຄ) ການຍອມເຊື່ອຟັງຜູ້ນຳ ເທົ່າກັບຍອມເຊື່ອຟັງພະເຈົ້າ ເພາະພະເຈົ້າເປັນຜູ້ແຕ່ງຕັ້ງຜູ້ນຳ

ງ) ການຍອມຢູ່ໃຕ້ອຳນາດ ເກີດຈາກທ່າທີໃນໃຈ ບໍ່ແມ່ນການເປັນທາດ

ຈ) ຜູ້ນຳຕ້ອງຮັບຜິດຊອບໃນວິນຍານຂອງເຮົາ ຕ້ອງເຮັດໃຫ້ເຂົາຍິນດີ ບໍ່ແມ່ນຮູ້ສຶກໜັກໃຈ

3. ມີບົດບາດໜ້າທີ່ສະເພາະຊຶ່ງຕ້ອງເຮັດ

ກ) **1ໂກຣິນໂທ 12:18** – ພະເຈົ້າຊົງຕັ້ງອະໄວຍະວະໄວ້ໃນພະກາຍ

ຂ) ອະໄວຍະວະແຕ່ລະສ່ວນໃນກາຍມີໜ້າທີ່ສຳຄັນຊຶ່ງຕ້ອງເຮັດ
ຫົວໃຈສູບສີດຊີວິດ, ປອດສູດອາກາດ, ໝາກໄຂ່ຫລັງລົດສານພິດ, ຫູເຮັດໜ້າທີ່ຟັງປາກເຮັດໜ້າທີ່ເວົ້າ.. ສະມາຊິກແຕ່ລະຄົນຈຶ່ງຕ້ອງຄົ້ນໃຫ້ພົບບົດບາດໜ້າທີ່ຂອງຕົນໃນຄຣິສຕະຈັກ

ຄ) ຈົ່ງຄົ້ນຫາຂອງປະທານຂອງຕົວເອງໃຫ້ພົບ – ດ້ານດົນຕຣີ, ອະນຸຊົນ, ເດັກຢ້ຽມຢາມ,ປະ ກາດ, ອະທິຖານເພື່ອຄົນປ່ວຍຕາມປົກກະຕິແລ້ວສິ່ງທີ່ທ່ານຮັກທີ່ຈະເຮັດຄືສິ່ງທີ່ເປັນ ຂອງ ປະທານຂອງທ່ານ

ງ) ຂໍໃຫ້ເຂົ້າຮ່ວມໃນງານນັ້ນໆ ໝຽວແໜ້ນໃນງານ ພັດທະນາຂອງປະທານຂອງຕົນ

ຈ) ຢ່າຢູ່ໃນພະກາຍລ້າໆ ໂດຍບໍ່ເຮັດອັນໃດ

4. ການຜູກພັນ

ກ) **ເຮັບເລີ 10:25** – ທຸ້ມເທ/ ຜູກພັນໃນການຮ່ວມປະຊຸມກັບຜູ້ເຊື່ອ

ຂ) ໃຫ້ຄິດວ່າ "ຂ້ອຍຈະໃຫ້ອັນໄດ້ແດ່" ແທນທີ່ຈະຄິດວ່າ "ຂ້ອຍຈະໄດ້ອັນໃດແດ່?"

ຄ) ການຜູກພັນ – ສາມີກັບພັນລະຍາ
– ນາຍຈ້າງ ກັບລູກຈ້າງ

ງ) **ໂຢຊວຍ 24:15** "ສ່ວນຂ້າພະເຈົ້າ ແລະຄອບຄົວຂອງຂ້າພະເຈົ້າ ເຮົາຈະປົນນິບັດພະເຈົ້າ"

ຈ) ລຸດ ກ່າວກັບນາໂອມີ, 1:16.."ເພາະແມ່ຈະໄປໃສຂ້ອຍຈະໄປນຳ ແລະແມ່ຈະອາໃສຢູ່ທີ່ໃດຂ້ອຍກໍຈະຢູ່ທີ່ນັ້ນດ້ວຍ ຍາດຂອງແມ່ຈະເປັນຍາດຂອງຂ້ອຍ ແລະພະເຈົ້າຂອງແມ່ກໍຈະເປັນພະເຈົ້າຂອງຂ້ອຍ"

ສ) ຜູກພັນຕົວເອງກັບຜູ້ນຳ ແລະສະມາຊິກຄຣິສຕະຈັກ ລວມທັງນິມິດ ແລະການຊົງເອີ້ນຂອງຄຣິສຕະຈັກທ້ອງຖິ່ນ

ຊ) ຄົນທີ່ກ່າວວ່າຕົວເອງຜູກພັນກັບຄຣິສຕະຈັກສາກົນແຕ່ບໍ່ຍອມຜູກພັນກັບຄຣິສຕະຈັກທ້ອງຖິ່ນເປັນຜູ້ມີຊີວິດຢູ່ໃນຄວາມປະໝາດ ເປີດໂອກາດໃຫ້ຕົວເອງພົບການທົດລອງ

5. ງານຮັບໃຊ້

GCI

ກ) **ມັດທາຍ 20:26–28** "ຖ້າຜູ້ໃດຢາກຈະໄດ້ເປັນໃຫຍ່ໃນພວກທ່ານຜູ້ນັ້ນຈະຕ້ອງເປັນຜູ້ບົວລະບັດທ່ານທັງຫລາຍ.. ບຸດມະນຸດບໍ່ໄດ້ມາເພື່ອຮັບການບົວລະບັດເຂົາ"

ຂ) **ຄາລາເຕັຽ 5:13** "ຈົ່ງຮັບໃຊ້ຊຶ່ງກັນແລະກັນດ້ວຍຄວາມຮັກ" ຈົ່ງໃຫ້ຄວາມຮັກເປັນແຮງຜັກດັນຂອງທ່ານຄືຄວາມຮັກທີ່ມີຕໍ່ພະເຈົ້າ ແລະຕໍ່ພີ່ນ້ອງຢ່າເຮັດສິ່ງໃດເພື່ອມຸ້ງຫວັງຜົນ ຕອບແທນຢ່າງອື່ນ

ຄ) **ເພງສັນລະເສີນ 100:2** "ຈົ່ງບົວລະບັດພະເຈົ້າ ດ້ວຍຄວາມຍິນດີ"

ງ) **ປັນຍາຈານ 9:10** "ມືຂອງເຈົ້າຈັບທຳການງານອັນໃດ ຈົ່ງເຮັດການນັ້ນດ້ວຍເຕັມກຳລັງຂອງເຈົ້າ"

ຈ) ເຖິງແມ່ນບົດບາດທີ່ທ່ານມີຢູ່ອາດເລັກນ້ອຍ ແຕ່ມີຄວາມຈຳເປັນແກ່ການດຳເນີນງານ ເຮັດໃຫ້ດຳເນີນໄປຢ່າງລາບລື້ນ

ສ) **1ໂກຣິນໂທ 12:25** – ບໍ່ມີຄວາມແຕກແຍກ ມີຄວາມຫວ່ງໃຍຊຶ່ງກັນແລະກັນ

ຊ) **1ໂກຣິນໂທ 4:2** – "ຝ່າຍຜູ້ອາລັກຂານັ້ນຕ້ອງເປັນຄົນທີ່ສັດຊື່ ໄວ້ໃຈໄດ້ທຸກຄົນ"

## V. ເຄື່ອງໝາຍຂອງຄຣິສຕະຈັກທີ່ເກີດຜົນ

### *ກ. ຜູ້ນຳທີ່ມີຊີວິດຢ່າງພະເຈົ້າ*

1. ຢ່າເລືອກຜູ້ນຳເພາະເປັນຜູ້ປະສົບຄວາມສຳເລັດໃນທຸລະກິດ ຫລືເປັນນັກຖວາຍຊັບທີ່ດີ – ຈະເອົາເງິນຊື້ ຄຣິສຕະຈັກບໍ່ໄດ້ – ຢ່າເລືອກເພາະເວົ້າເກັ່ງ – ແຕ່ຈົ່ງເລືອກເພາະມີຊີວິດໃນທາງ ຂອງພະເຈົ້າ ແລະມີຄຸນ ສົມບັດຂອງຜູ້ປົກຄອງ/

   ນັກຄະນາຍົກຢ່າດຳເນີນຄຣິສຕະຈັກໂດຍໃຫ້ຄົນທີ່ບໍ່ເປັນຄຣິສຕຽນ ຫລືຄຣິສ ຕຽນທີ່ອຸ່ນໆ ເປັນຜູ້ນຳ

2. ຕັ້ງເປົ້າສຳລັບງານພັນທະກິດ

   ກ) ກຳໜົດທິດທາງຂອງງານພັນທະກິດ ບໍ່ເຊັ່ນນັ້ນຈະເປັນເໝືອນກັບການປາເປົ້າຊຶ່ງບໍ່ຖືກ ອັນໃດເລີຍ

   ຂ) ເຮັດໃຫ້ທຸກຄົນຕັ້ງເປົ້າໝາຍຮ່ວມກັນໄດ້

   ຄ) ເປົ້າໝາຍພື້ນຖານຄືການນຳຄົນມາເຖິງພະຄຣິດ ແລະສ້າງເຂົາໃຫ້ເປັນສາວົກແຕ່ຕ້ອງລະບຸວ່າຈຳນວນຈັກຄົນ ເມື່ອໃດ ຢ່າງໃດ

   ງ) ວາງແຜນງານສຳລັບພັນທະກິດ

3. ມີສ່ວນຮ່ວມໃນການສ້າງສາວົກ

   ກ) ຄຣິສຕະຈັກຈຳເປັນຕ້ອງເຕີບໃຫຍ່ເປັນຜູ້ໃຫຍ່ – ບໍ່ແມ່ນເປັນເດັກທາລົກຢູ່ຕະຫລອດ

   ຂ) ສັ່ງສອນຄວາມຈິງຈາກພະວັດຈະນະຂອງພະເຈົ້າ

   ຄ) ຊ່ວຍບັນດາສາວົກໃຫ້ນຳຄວາມຈິງຈາກພະວັດຈະນະໄປໃຊ້ໃນຊີວິດປະຈຳວັນ

   ງ) ຊ່ວຍບັນດາສາວົກໃຫ້ແກ້ບັນຫາໂດຍພະວັດຈະນະຂອງພະເຈົ້າ ເມື່ອປະເຊີນວິກິດການສາມາດໃຊ້ຫລັກຂອງພະຄຳພີໃນການແກ້ໄຂບັນຫາໄດ້

GCI

4. ມີການເນັ້ນພັນທະກິດໃນທາງລຸກສູ່ຊຸມຊົນ

ກ) ທ່ານຕ້ອງອອກໄປສູ່ຊຸມຊົນ ຊຸມຊົນຈະບໍ່ເຂົ້າມາຫາຄຣິສຕະຈັກ

ຂ) ການປະກາດທີ່ເກີດຜົນດີທີ່ສຸດ ຄືການເປັນພະຍານຕໍ່ຕໍ່ຕໍ່ໃນພື້ນທີ່ທີ່ທ່ານອາໃສຢູ່ນັ້ນ

ຄ) ຄອບຄົວຂອງທ່ານຄວນເປັນເປົ້າໝາຍທໍາອິດ ໃນກາລີມັນຕັນຖ້າຫົວໜ້າຄອບຄົວມາເຊື່ອ ພະເຈົ້າທັງຄອບຄົວຈະມາຮັບເຊື່ອນໍາ ໃນບາງໝູ່ບ້ານຖ້າຫົວໜ້າໝູ່ບ້ານມາຮັບເຊື່ອທັງໝູ່ບ້ານກໍຈະຮັບເຊື່ອຕາມ ຂໍໃຫ້ຕັ້ງເປົ້າໝາຍໃນການປະກາດຂອງທ່ານ

ງ) ທ່ານຢາກໄດ້ສິ່ງໃດຫລາຍກວ່າກັນ? ການຈັດງານປະກາດນຶ່ງອາທິດ ປີລະນຶ່ງຄັ້ງໂດຍນັກເທດຈາກເມືອງນອກ ຫລືຄຣິສຕະຈັກທີ່ເຮັດການປະກາດປີລະ 365ວັນ?

ຈ) ເຮົາຕ້ອງເພີ້ມພູນສະມາຊິກ ບໍ່ແມ່ນອາໃສຄົນທີ່ຍ້າຍມາຈາກຄຣິສຕະຈັກອື່ນ ແຕ່ໂດຍການ ເຮັດໃຫ້ຄົນຮັບເຊື່ອໃຫມ່

(1) ກິດຈະການ 16:5 ຄຣິສຕະສະມາຊິກເພີ່ມຈໍານວນຂຶ້ນທຸກວັນ

(2) **ກິດຈະການ13:44** ຄົນເກືອບທົ່ວທັງເມືອງພາກັນມາຟັງພະວັດຈະນະຂອງພະເຈົ້າ

5. ມີຄວາມຫວ່ງໃຍຊຶ່ງກັນແລະກັນ

ກ) ຈໍາເປັນຕ້ອງກ່ຽວຂ້ອງກັບຊີວິດຂອງສະມາຊິກໃນຄຣິສຕະຈັກ ບໍ່ແມ່ນພຽງແຕ່ຍ່າງເຂົ້າ ມາໃນບ່ອນປະຊຸມ ນັ່ງລົງ ຍ່າງອອກໄປ ແລ້ວບອກວ່າເຮົາມີສ່ວນກັບຄຣິສຕະຈັກແລ້ວ

ຂ) **ເຮັບເລີ 10:24-25** "ຈົ່ງໝູນໃຈຊຶ່ງກັນແລະກັນ" ຖ່ານໄຟສາຍທີ່ຢູ່ຕາມລໍາພັງຍ່ອມບໍ່ກໍ່ໃຫ້ເກີດພະລັງໄຟຟ້າ ແຕ່ເມື່ອຕໍ່ເຂົ້າກັບຂົ້ວໄຟຟ້າ ແລະຖ່ານກ້ອນອື່ນກໍມີພະລັງໄຟ

ຄ) **ຄາລາເຕັຽ 6:2** "ຈົ່ງຮັບພາລະຂອງກັນແລະກັນ"

ງ) **ຢາໂກໂບ 5:16** "ຈົ່ງອະທິຖານເພື່ອຊຶ່ງກັນແລະກັນ"

ຈ) ຈົ່ງໃຊ້ເວລາທີ່ຈະຮັບຟັງກັນແລະກັນ ສະແດງຄວາມຫວ່ງໃຍຊຶ່ງກັນແລະກັນ

ສ) ຄຣິສຕະຈັກຕ້ອງເປັນຊຸມຊົນແຫ່ງຄວາມຮັກ ມີການແບ່ງປັນຊຶ່ງກັນແລະກັນເບິ່ງຄຣິສຕະຈັກຍຸກທໍາອິດ ທຸກຄົນຖືວ່າສິ່ງທີ່ມີຢູ່ນັ້ນເປັນສົມບັດສ່ວນລວມ

6. ຫຸ້ມເທເພື່ອເລື່ອງຄອບຄົວ

ກ) **ອົບພະຍົບ 20:21** "ຈົ່ງໃຫ້ກຽດແກ່ບິດາມານດາຂອງເຈົ້າເພື່ອອາຍຸຂອງເຈົ້າຈະໄດ້ຍືນນານເທິງແຜ່ນດິນ ຊຶ່ງພະເຈົ້າຂອງເຈົ້າປະທານໃຫ້ແກ່ເຈົ້າ

ຂ) **ເອເຟໂຊ 6:1** "ຝ່າຍບຸດຈົ່ງນົບນ້ອມເຊື່ອຟັງບິດາມານດາຂອງຕົນໃນອົງພະຜູ້ເປັນເຈົ້າ"

ຄ) **ເອເຟໂຊ5:25** "ຝ່າຍສາມີກໍຈົ່ງຮັກພັນລະຍາຂອງຕົນ ເໝືອນຢ່າງທີ່ພະຄຣິດຊົງຮັກຄຣິສຕະຈັກ"

ງ) **ເອເຟໂຊ 5:22** "ຝ່າຍພັນລະຍາ ຈົ່ງຍອມຟັງສາມີຂອງຕົນ ເໝືອນຍອມຟັງອົງພະຜູ້ ເປັນເຈົ້າ"

ຈ) **ເອເຟໂຊ6:4** "ຝ່າຍທ່ານຜູ້ເປັນບິດາ ຢ່າຍຸບຸດຂອງຕົນໃຫ້ເກີດໂມໂຫ.."

ສ) ຄວາມຈິງເຫລົ່ານີ້ຈໍາເປັນຕ້ອງສັ່ງສອນແກ່ຄຣິສຕະຈັກ

ຊ) ສະມາຊິກຄຣິສຕະຈັກຕ້ອງເຂົ້າໃຈວ່າສິ່ງທີ່ສໍາຄັນທີ່ສຸດສໍາລັບເຂົາຮອງຈາກພະເຈົ້າແລ້ວກໍຄືຄອບຄົວ ຫລາຍຄັ້ງທີ່ເຂົາມົວແຕ່ສາລະວົນເຮັດສິ່ງອື່ນ

ຍ) ເອລີ ຜູ້ເຜີຍພະວັດຈະນະໃນພະຄໍາພີເດີມ ເບິ່ງແຍງເອົາໃຈໃສ່ຊີວິດຝ່າຍວິນຍານຂອງ ທຸກຄົນແຕ່ປ່ອຍໃຫ້ລູກຊາຍຂອງຕົນກາຍເປັນຄົນອັນຕະພານພະເຈົ້າຈຶ່ງຊົງພິພາກສາເຂົາ

7. ສັ່ງສອນ ແລະເທດສະໜາພະຄຳພີ

    ກ) ເທດສະໜາສິ່ງທີ່ພະອັດຈະນະພະເຈົ້າກ່າວໄວ້ ບໍ່ແມ່ນເຫດການປະຈຸບັນ ຫລືສິ່ງທີ່ຄິດວ່າ ຄົນຢາກຈະຟັງ
    ຂ) ສິ່ງທີ່ຈະປ່ຽນຊີວິດຄົນໄດ້ຄືພະອັດຈະນະເທົ່ານັ້ນ

8. ພ້ອມທີ່ຈະປ່ຽນແປງ

    ກ) ພະເຈົ້າຊົງເປັນຜູ້ທີ່ປ່ຽນດ້ວຍຄວາມຄິດສ້າງສັນ ພະອົງປະສົງທີ່ກະທຳສິ່ງໃຫມ່ໆສະເໝີທ່າມກາງເຂົາ
    ຂ) ການຍຶດຕິດກັບທຳນຽມອາດເຮັດໃຫ້ເຮົາຮູ້ສຶກປອດໄພ – ກຳແພງແຫ່ງຄວາມພົ້ນຂອງເອລີຢາ ແລະປະຕູແຫ່ງການສັນລະເສີນ
    ຄ) ບາງຄັ້ງເຮົາຕ້ອງພ້ອມທີ່ຈະເຮັດອັນໃດນອກຮູບແບບແດ່ – ປ່ຽນລຳດັບການປະຊຸມນະ ມັດສະການ
    ງ) ຢ່າຍຶດຕິດຢູ່ແຕ່ໃນກອບໂຄງສ້າງເດີມໆ ໂຄງສ້າງເປັນສິ່ງທີ່ດີ ແຕ່ຢ່າຍອມໃຫ້ມັນເຮັດໃຫ້ເຮົາຂາດຄວາມມີຊີວິດຊີວາ
    ຈ) ຈົ່ງໄວຕໍ່ພະວິນຍານບໍລິສຸດ
    ສ) ປັບປ່ຽນເພື່ອໃຫ້ຕອບສະໜອງຄວາມຕ້ອງການຂອງຄົນ

ຂ. ວິໄນຂອງຄຣິສຕະຈັກ

ຄຳນິຍາມ – ໝາຍເຖິງການໃຫ້ວິໄນໂດຍຄຳສອນ ແລະການວ່າກ່າວຕັກເຕືອນ

ອາດຈະຕ້ອງມີການລົງໂທດ

ຄືກົດລະບຽບເພື່ອຄວບຄຸມພຶດຕິກຳ

1. ຄວາມຈຳເປັນທີ່ຕ້ອງມີວິໄນ

    ກ) ເພື່ອຄວາມເປັນລະບຽບ ແລະການຢູ່ຮ່ວມກັນຢ່າງມີຄວາມສຸກ
    ຂ) ເພື່ອຝຶກສອນຫລັກການແຫ່ງການຍອມຢູ່ໃຕ້ອຳນາຈ – ການຍອມໃຫ້ເຈດຕະນາຂອງຕົນເອງຢູ່ໃຕ້ນ້ຳພະໄທພະເຈົ້າ ແລະພະອັດຈະນະຂອງພະອົງ
    ຄ) ເມື່ອເຮັດໄປດ້ວຍຄວາມຮັກ ຈະເຮັດໃຫ້ຄົນມີຄວາມຮູ້ສຶກໝັ້ນຄົງ – ການເຮັດໃຫ້ຄົນຮູ້ຈັກຂອບເຂດອັນສົມຄວນເປັນການປ້ອງກັນເຂົາໄວ້ຈາກການຫລົງຫາຍ

2. ຈຸດປະສົງຂອງວິໄນ

    ກ) ເຮັດໃຫ້ຄົນຮູ້ສຶກຜິດເມື່ອເຂົາເຮັດຜິດ ຊຶ່ງຈະນຳໄປສູ່ການກັບໃຈໃຫມ່ບໍ່ແມ່ນເພື່ອປັບໂທດ ເຮັດໃຫ້ຂາຍໜ້າ ຫລືເຮັດໃຫ້ເຂົາຮູ້ສຶກຕ່ຳຕ້ອຍ
    ຂ) ເປັນການແກ້ໄຂສິ່ງທີ່ຜິດໃຫ້ຖືກຕ້ອງ ບໍ່ແມ່ນສະແດງການບໍ່ຍອມຮັບຜູ້ເຮັດຜິດ
    ຄ) ນຳຜູ້ເຮັດຜິດໃຫ້ກັບຄືນສູ່ຄວາມສຳພັນອັນດີກັບພະເຈົ້າ ແລະກັບພີ່ນ້ອງໃນຄຣິສຕະຈັກ

GCI

ງ) ຊ່ວຍໃຫ້ເຂົາກັບຕັ້ງຕົວໃຫມ່ - ຄາລາເຕັຽ 6:1 ແປວ່າ"ຊ້ອມແຊມ" ຫລືແກ້ໄຂ
ຈ) ມີບາດແຜທີ່ຈຳເປັນຕ້ອງໄດ້ຮັບການປຽວຢາ

3. ຕົວຢ່າງຂອງການລົງວິໄນ

ກ) ອາດາມກັບເອວາ
ຂ) ກາອິນ -
ຄ) ມີລຽມ
ງ) ອາຄານ
ຈ) ໂນອາ ແລະນາວາໃຫຍ່
ສ) ການລົງໂທດເມືອງໂຊໂດມ ກັບໂກໂມລາ
ຊ) ຫໍບາເບລ
ຍ) ອານາເນັຽ ກັບຊັບຟີລາ

4. ຂັ້ນຕອນຝ່າຍວິນຍານໃນການລົງວິໄນ **– ມັດທາຍ 18:15-20**

ກ) ລົງວິໄນເປັນສ່ວນຕົວ
ຂ) ລົງວິໄນໃນທີ່ສາທາລະນະ

(1) ຂັ້ນຕອນທຳອິດ ຂໍ້ 15 "ຈົ່ງໄປຫາເຂົາເປັນສ່ວນຕົວ ..
ສິ່ງທີ່ຕ້ອງມີ - ທ່າທີແລະກິລິຍາທີ່ຖືກຕ້ອງເໝາະສົມ
ຄຳເວົ້າທີ່ເໝາະສົມດ້ວຍວິນຍານທີ່ຖືກຕ້ອງ
ຄວາມປາດຖະໜາທີ່ຈະຄືນດີກັນ
ມີໃຈຍອມຮັບເຂົາ

(2) ຂັ້ນຕອນທີ່ສອງ ຂໍ້ 16 "ຖ້າເຂົາບໍ່ຍອມ..

ອາດເປັນ - ເພື່ອສະໜິດຂອງເຂົາບາງຄົນ

ຄົນທີ່ເຂົາໄວ້ໃຈຫລືໝັ້ນໃຈ

ໃຫ້ພະຍານທັງສອງຟັງເລື່ອງທີ່ເກີດຂຶ້ນ

ແລ້ວປະເມີນເບິ່ງເລື່ອງລາວ

ສິ່ງນີ້ຈະຊ່ວຍໃຫ້ເຂົາຮູ້ວ່າຄວາມຜິດຂອງເຂົາເປັນເລື່ອງຈິງຈັງ ແລະເຂົາຈຳເປັນຕ້ອງຟ້າວແກ້ໄຂແຈ້ງໃຫ້ເຂົາຮູ້ເຖິງຂັ້ນຕອນທີ່ສາມຊຶ່ງຈະເກີດຂຶ້ນຖ້າເຂົາບໍ່ຍອມຕອບສະໜອງຕໍ່ທັງສອງຂັ້ນຕອນ

(3) ຂັ້ນຕອນທີ່ສາມ **ຂໍ້ 17** "ຖ້າຍັງບໍ່ຍອມຟັງ ຈົ່ງໄປແຈ້ງຄວາມນັ້ນແກ່ຄຣິສຕະຈັກ ເປົ້າໝາຍຍັງຄົງເປັນເພື່ອຊ່ວຍໃຫ້ເຂົາກັບຕັ້ງຕົວໄດ້ ແລະໃຫ້ສະມາຊິກຄຣິສຕະຈັກຊ່ວຍຂໍຮ້ອງໃຫ້ເຂົາກັບໃຈໃຫມ່ແລະລະຖິ້ມຄວາມບາບ

GCI

(4) ຂັ້ນຕອນທີ່ສີ່ ຂໍ້ 17 – ຖ້າເຂົາຍັງບໍ່ຍອມຟັງຄຣິສຕະຈັກຈຶ່ງໄລ່ເຂົາອອກຈາກຄຣິສຕະຈັກ ເລື່ອງນີ້ທຸກຄົນໃນຄຣິສຕະຈັກຕ້ອງເຮັດດ້ວຍຄວາມ ເປັນນ້ຳນຶ່ງໃຈດຽວກັນ (ຈາກນັ້ນ ຜູ້ທີ່ເຮັດບາບຈະຖືກຜູກມັດ)

(5) ຂັ້ນຕອນທີຫ້າ ຂໍ້18 – ໄດ້ຮັບການປົດປ່ອຍເມື່ອເຂົາກັບໃຈເສັຽໃໝ່

ຄວາມເຫັນທີ່ແຕກຕ່າງກັນອອກໄປ ຫລືບຸກຄະລິກຂອງແຕ່ລະຄົນ ອາດເຮັດໃຫ້ບໍ່ສາມາດດຳເນີນເຖິງຂັ້ນຕອນທີ 3 ຫລືເກີນກວ່ານັ້ນ ຕົວຢ່າງຂອງຄວາມບາບທີ່ຄວນນຳໄປແຈ້ງຕໍ່ໜ້າຄຣິສຕະຈັກ ໄດ້ແກ່ ການປະພຶດຜິດທາງສິນລະທຳ ແລະຄວາມບໍ່ຊື່ສັດເປັນຕົ້ນ

5. ການຊ່ວຍພີ່ນ້ອງທີ່ຫລົງກະທຳບາບໃຫ້**ກັບຕັ້ງຕົວໃໝ່ – ຄາລາເຕັຽ 6:1**

ກ) ໝາຍເຖິງການຮື້ຟື້ນໃຫ້ກັບສູ່ສະພາບເດີມ

ຂ) ຊ່ວຍຮື້ຟື້ນເຂົາດ້ວຍໃຈສຸພາບ ອ່ອນໂຍນ

ຄ) ລະລຶກສະເໝີວ່າ ຕົນເອງອາດລົ້ມລົງໃນບາບໄດ້ເຊັ່ນກັນ

ງ) ຄາລາເຕັຽ 6:20 "ຈົ່ງຊ່ວຍແບກພາລະຂອງກັນແລະກັນ" ໝູນກຳລັງເຂົາຂຶ້ນ

ຈ) ຖ້າບາງຄົນລົ້ມລົງເພາະພາລະທີ່ເຂົາແບກນັ້ນໜັກເກີນໄປ ເຮົາຄວນກົ້ມ ລົງເພື່ອຊ່ວຍພາລະຂອງເຂົານັ້ນ

ສ) ຜູ້ທີ່ເຮັດບາບ ອາດຈະກັບໃຈຈາກຄວາມບາບນັ້ນມາຫລາຍຄັ້ງແລ້ວ ເຂົາຕ້ອງການຊ່ວຍເຫລືອເພື່ອໃຫ້ເອົາຊະນະຄວາມບາບນັ້ນໄດ້

ຊ) ຄາລາເຕັຽ 6:6"ຜູ້ທີ່ໄດ້ຮັບຄຳສອນນັ້ນຕ້ອງແບ່ງປັນແກ່ຜູ້ທີ່ສອນຕົນ" ຈົ່ງເສີມສ້າງເຂົາຂຶ້ນ ຈົ່ງໜູນໃຈພີ່ນ້ອງທີ່ລົ້ມລົງໃນບາບ

ຍ) ຖ້າໃຫ້ອະໄພບາບແລ້ວ ຄວນຈະຊ່ວຍເຂົາໃຫ້ກັບຕັ້ງຕົວໃໝ່ດ້ວຍສະເໝີ

ດ) ຖ້າພີ່ນ້ອງຜູ້ນັ້ນໄດ້ຮັບການຮື້ຟື້ນແລ້ວ ຢ່າຢ້ານເຖິງຄວາມບາບຂອງເຂົາອີກ

ເອກະສານອ້າງອີງ